## ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 01 ເມສາ 2007 ( 04-01-2007 )

# ອົງພຣະເຢຊູໄດ້ສິ້ນພຣະຊົນເພື່ອພວກເຮົາ:

**ຂໍ້ພຣະຄັມພີໃນບົດຮຽນ:** ໂຢຮັນ 12:12-15; 13:21,26-27; 19:16-19,33-37

**ຄຳຖາມແຫ່ງຊີວິດ:** ເປັນດ້ວຍເຫດໃດອົງພຣະເຢຊູຈຳເປັນຈຶ່ງຕ້ອງສິ້ນພຣະຊົນ?

**ຄວາມຈິງໃນພຣະຄັມພີ:** ພຣະເຢຊູ, ພຣະເມສີອາ, ຜູ້ເປັນເຈົ້າຊີວິດໄດ້ສິ້ນພຣະຊົນທີ່ໄມ້ກາງແຂນແທນຄວາມຜິດບາບຂອງພວກເຮົາ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ແມ່ນເພື່ອຊ່ອຍທ່ານໃຫ້ຄົ້ນພົບວ່າອົງພຣະເຢຊູໄດ້ເຮັດຫຍັງເພື່ອພວກເຮົາໂດຍ:

- ໃຫ້ຮູ້ວ່າການສິ້ນພຣະຊົນຂອງພຣະເຢຊູນັ້ນກໍເພື່ອຄວາມຜິດບາບຂອງພວກເຮົາ ແລະ
- ໃຫ້ຂອບພຣະຄຸນຕໍ່ອົງພຣະເຢຊູທີ່ພຣະອົງໄດ້ສິ້ນພຣະຊົນທີ່ໄມ້ກາງແຂນເພື່ອພວກເຮົາ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**ແຜນການສອນ**", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**ແນະນຳ:** ໃຫ້ນັກຮຽນບັນລະຍາຍເຣື່ອງທີ່ດີບາງຢ່າງທີ່ມີຄົນອື່ນເຮັດເພື່ອເຂົາເຈົ້າ.
ບາງເທື່ອກໍເປັນການຍາກສຳລັບທ່ານທີ່ຈະຮູ້ ແລະຈະຕອບສນອງຕໍ່ຄົນນັ້ນ.

**ຄຳຖາມ:** 1. ທ່ານຄວນຈະຕອບສນອງຕໍ່ຜູ້ທີ່ເຮັດດີຕໍ່ທ່ານຢ່າງໃດ?
2. ພຣະເຢຊູໄດ້ຊົງເຮັດຫຍັງເພື່ອພວກເຮົາ?

**ອະທິບາຍ:** ໃນ 4 ອາທິດທີ່ຜ່ານມາພວກເຮົາໄດ້ຮຽນສິ່ງປະເສີດທີ່ອົງພຣະເຢຊູໄດ້ຊົງກະທຳເພື່ອພວກເຮົາ.
- ອ່ານພຣະທັມ ໂຣມັນ 5:7-8 . ແລະສັງເກດເບິ່ງຄວາມຈິງທີ່ພຣະເຢຊູໄດ້ຊົງສິ້ນພຣະຊົນເພື່ອພວກເຮົານັ້ນເປັນເພາະເຫດໃດ?

## 1. <u>ໃນເຫດການຂອງຄວາມໂສກເສົ້າເສັຽໃຈ:</u> ( ໂຢຮັນ 12:12-15)

1) ຂໍໃຫ້ນັກຮຽນອາສາອ່ານ ໂຢຮັນ 12:12-15

2) **ຄຳຖາມ:** 1. ພວກເຮົາຢາກໃຫ້ທີມກິລາທີ່ເຮົາມັກນັ້ນເຮັດຢ່າງໃດໃຫ້ແກ່ພວກເຮົາ?

2. ພວກເຮົາເຊີຽ ຫລື ສລອງທີມທີ່ພວກເຮົາມັກທີ່ໄດ້ຊະນະດ້ວຍວິທີໃດ?

3. ພວກເຮົາໄດ້ສເລີມສລອງໄຊຍຊະນະຂອງອົງພຣະເຢຊູຄຣິດໂດຍທາງໃດ?

4. ໃນເມື່ອຝູງຊົນທີ່ກຸງເຢຣູຊາເລັມໄດ້ຍິນຂ່າວວ່າພຣະເຢຊູຂີ່ມ້າລໍນ້ອຍມາ
   ພວກເຂົາເຈົ້າໄດ້ພາກັນເຮັດຫຍັງແດ່?

5. ການທີ່ພຣະເຢຊູຊົງຂີ່ລໍນ້ອຍນັ້ນມີຄວາມໝາຍແນວໃດ?

3) **ອະທິບາຍ:** ພຣະເຢຊູໄດ້ຊົງສະເດັດມາາເພື່ອເປັນກະສັດ ແລະເປັນຜູ້ຊ່ອຍໃຫ້ລອດພົ້ນຂອງເຂົາເຈົ້າ, ແຕ່ເຂົາເຈົ້າບໍ່ໄດ້ຄິດວ່າພຣະອົງເປັນພຣະເຈົ້າທີ່ເອົາຊະນະຄວາມຕາຍໄດ້.

- ເຖີງປານນັ້ນ, ພວກທີ່ຕ້ອນຮັບເອົາພຣະເຢຊູກໍຍັງບໍ່ເຂົ້າໃຈເຖີງບົດບາດການເປັນກະສັດຂອງພຣະອົງຢ່າງແຈ່ມແຈ້ງ ແລະບໍ່ຮູ້ຈະຕອບສນອງຕໍ່ພຣະອົງຢ່າງໃດດີ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ໂຢຮັນ 12:12-15

1) ອົງພຣະເຢຊູໄດ້ຮັບການຕອບສນອງຢ່າງໃດແດ່ຈາກຄົນໃນສມັຍນັ້ນ? ແລະໃນສມັຍນີ້ເດ?

2) ເຂົາເຈົ້າໄດ້ຮຽກພຣະເຢຊູວ່າແນວໃດ? ກະສັດຢ່າງໃດທີ່ເຂົາເຈົ້າຕ້ອງການ?

3) ກຸ່ມຄົນເຫລົ່ານັ້ນມີອາລົມຢ່າງໃດໃນມື້ນັ້ນ?

4) ພວກເຮົາຈະຕ້ອນຮັບ ແລະນະມັສການພຣະອົງຢ່າງເຕັມປ່ຽມດ້ວຍຈິດໃຈຂອງພວກເຮົາຢ່າງໃດ?

## 2. <u>ການທໍຣະຍົດຢ່າງຕົກໃຈ:</u> ( ໂຢຮັນ 13:21,26-27)

1) ຂໍໃຫ້ອາສາອ່ານພຣະທັມ ໂຢຮັນ 13:21, 26-27

2) ຖາມ: ທ່ານຈະຮູ້ໄດ້ຢ່າງໃດວ່າແມ່ນໃຜເປັນແຟນກິລາແທ້ ໆ ຂອງທີມກິລານັ້ນ?

3) **ອະທິບາຍ:** ເຊັ່ນກັນ: ບໍ່ແມ່ນໝົດທຸກຄົນທີ່ຕິດຕາມພຣະເຢຊູຈະຈິງໃຈສັດຊື່ໝັ້ນຄົງ ບາງຄົນກໍໄດ້ເບິ່ງວ່າພຣະອົງບໍ່ໄດ້ເປັນຜູ້ຊະນະຢ່າງແທ້ຈິງ. ( ຕົວຢ່າງການທໍຣະຍົດຂອງຢູດາ )

4) **ຄຳຖາມ:** 1. ພຣະເຢຊູມີຄວາມຮູ້ສືກແນວໃດໃນເຣື່ອງການທໍຣະຍົດທີ່ກຳລັງຈະເກີດຂື້ນຕໍ່ພຣະອົງ?

2. ມັນເປັນການສ້າງຄວາມປລາດໃຈໃຫ້ກັບພຣະອົງບໍ?

3. ພຣະເຢຊູໄດ້ກ່າວວ່າຢ່າງໃດ ກ່ອນຈະຍື່ນເຂົ້າຈີ່ໃຫເຢູດາ?

4. ການສີ້ນພຣະຊົນຂອງອົງພຣະເຢຊູໄດ້ມີຄວາມໝາຍຫຍັງສຳລັບທ່ານ?

5. ພວກເຮົາຈະຕອບສນອງຄວາມຮັກຂອງພຣະອົງຢ່າງໃດໃຫ້ມີຄວາມສຳຄັນທີ່ແຕກຕ່າງຈາກການຕອບສນອງຂອງຢູດາ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ( ໂຢຮັນ 13:21, 26-27 )

1. ພຣະເຢຊູຄຣິດໄດ້ຊົງສຳແດງ (ຊີ້ຕົວ ) ຜູ້ທີ່ທໍຣະຍົດພຣະອົງດ້ວຍວິທີໃດ?
2. ເປັນຫຍັງຈື່ງເຮັດໃຫ້ຜູ້ທໍຣະຍົດຕົກໃຈໝົດແຮງ?
3. ຢູດາມີທາງເລືອກບໍ່? ເປັນຫຍັງຈື່ງມີ ແລະເປັນຫຍັງຈື່ງບໍ່ມີ?
4. ແມ່ນຫຍັງທີ່ໜູນຫລັງໃຫ້ຢູດາເຮັດຢ່າງນັ້ນຕໍ່ພຣະເຢຊູ?
5. ພວກເຮົາຈະຫລີກເວັ້ນການເປັນຢູດາໄດ້ແນວໃດ?

**3. <u>ການສິ້ນພຣະຊົນຢ່າງບໍ່ຜິດພາດ:</u>** ( ໂຢຮັນ 19:16-19, 33-37)

1) ຂໍໃຫ້ນັກຮຽນອາສາອ່ານ ໂຢຮັນ 19:16-19, 33-37

2) **ອະທິບາຍ:** ໃຫ້ພວກເຮົາມອງໄປເບິ່ງການສິ້ນພຣະຊົນຂອງອົງພຣະເຢຊູຄຣິດ ເພາະວັນນີ້ເປັນວັນອາທິດ ກ່ອນວັນສຸກທີ່ພຣະອົງຊົງສິ້ນພຣະຊົນ. ບົດຮຽນຕໍ່ໄປແມ່ນວັນອາທິດວັນຟື້ນພຣະຊົນນັ້ນ ( ອີສເຕີ )

- ຖ້າພວກເຮົາສຳຣວດພຶດຕິການຂອງພວກທະຫານ, ປີລາດ ແລະໂຢຮັນແລ້ວ, ພວກເຮົາຈະເຫັນວ່າມີ ຄວາມແຕກຕ່າງກັນໃນທ່າທີຕໍ່ການສິ້ນພຣະຊົນຂອງພຣະເຢຊູນັ້ນ.

3) **ຄຳຖາມ:** 1) ເປັນຫຍັງໂຢຮັນຈຶ່ງນຳເອົາຄວາມເຈັບປວດມາຢັ້ງຢືນວ່າພຣະເຢຊູໄດ້ຊົງສິ້ນພຣະຊົນແທ້ຈິງ?

2) ຢູ່ໃນພຣະທັມ ໂຢຮັນ 19:37 ເປັນເໝືອນຄຳອ້າງ (ກ່າວ) ຂອງທ່ານເຊຄາຣີຢາ ( ຊຄຢ 12:10 ) .

3) ໃນພຣະທັມເຊຄາຣີຢາ 13:1, ຖາມ: ຜົນຂອງການລັ່ງພຣະໂລຫິດ ແລະນ້ຳທີ່ລັ່ງໄຫລອອກມາຈາກພຣະກາຍ ຂອງພຣະອົງນັ້ນແມ່ນຫຍັງ? ເປັນຫຍັງພຣະອົງຈຶ່ງຕ້ອງສິ້ນພຣະຊົນ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ໂຢຮັນ 19:16-19, 33-37

1. ແມ່ນທະຫານຄຸມຕົວພຣະອົງໄປທີ່ໄມ້ກາງແຂນ ຫລືວ່າພຣະອົງສມັກໄປເອງ?
2. ທ່ານຄິດວ່າແມ່ນພຣະເຈົ້າຊົງດົນໃຈໃຫ້ໂຢຮັນຂຽນຄຳພິພາກສາເຣື່ອງການຄຶງຂອງພຣະເຢຊູທີ່ໄມ້ກາງແຂນ ພຽງສັ້ນ ໆ ແລະເທື່ອດຽວເທົ່ານັ້ນບໍ?
3. ເປັນດ້ວຍເຫດໃດພວກທະຫານຈຶ່ງແທງຂ້າງຂອງພຣະເຢຊູຫລາຍກວ່າຂາຂອງພຣະອົງ?
4. ຈະວ່າຢ່າງໃດໃນເຣື່ອງນີ້, ແມ່ນໃຜເປັນຜູ້ເຮັດໃຫ້ເຫດການນີ້ສຳເຣັດ?

**<u>ສລູບ</u>:**

**ຈົ່ງຈົດຈໍ່ຢູ່ໃນບົດຮຽນແຫ່ງຄວາມຈິງນີ້**

ໜູນໃຈນັກຮຽນໃຫ້ໃຊ້ເວລາອະທິຖານໃນອາທິດນີ້ເປັນປະຈຳ ແລະອ່ານພຣະຄັມພີທຸກວັນ.

- ຂໍໃຫ້ພວກເຮົາໝັ່ນມານະມັສການພຣະອົງ
- ຂໍໃຫ້ພວກເຮົາເອົາຄວາມເຊື່ອປ້ອງກັນການທົດລອງ ການຕໍ່ສູ້ພຣະອົງ ແລະຄຳສອນຂອງ ພຣະອົງ.
- ຂໍໃຫ້ພວກເຮົາຍຶດໝັ້ນໃນຄວາມຈິງໃນການສິ້ນພຣະຊົນອັນມະຫັສຈັນຂອງພຣະເຢຊູ ເທິງໄມ້ກາງແຂນແທນພວກເຮົານັ້ນ ແລະຕັດສິນໃຈຮັບເອົາພຣະອົງ, ຍອມໃຫ້ພຣະອົງ ເປັນກະສັດຢູ່ໃນຫົວໃຈຂອງເຮົາ ແລະໃນການດຳເນີນຊີວິດຂອງພວກເຮົາ.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )